# ແຜນແມ່ບົດ ການຂົນສົ່ງໃນຕົວເມືອງ ຫຼວງພະບາງ 2025-2045

ສ້າງການຂົນສົ່ງໃນນະຄອນຫຼວງພະບາງ ໃຫ້ເປັນລະບົບທີ່ຍືນຍົງ, ມີຄວາມສະດວກ, ປອດໄພ, ເປັນມິດກັບສິ່ງແວດລ້ອມ ຄຽງຄູ່ກັບການປົກປັກຮັກສາວັດທະນະທຳ, ສະຖາປັດຕະຍະກຳ ແລະ ທັດສະນີຍະພາບຂອງຫຼວງພະບາງເມືອງມໍລະດົກໂລກ



## ບັນຫາໃນປະຈຸບັນ ແລະ ສິ່ງທ້າທາຍໃນອະນາຄົດ

ຫຼວງພະບາງກໍາລັງຜະເຊີນກັບບັນຫາຫຼາຍດ້ານ ທີ່ເນື່ອງມາຈາກການເພີ່ມຂຶ້ນຂອງປະຊາກອນ, ການຫັນເປັນຕົວເມືອງ ຢູ່ ເຂດອ້ອມຮອບຕົວເມືອງ ແລະ ການເພີ່ມຂຶ້ນຂອງຈໍານວນນັກທ່ອງທ່ຽວ ເຊິ່ງສິ່ງຜົນເຮັດໃຫ້ຄວາມປອດໄພດ້ານການສັນຈອນຫຼຸດລົງ, ໜ້າທີ່ຂອງຕົວເມືອງຫຼຸດລົງ, ນັກທ່ອງທ່ຽວບໍ່ເພິ່ງພໍໃຈ ແລະ ຫຼຸດຄຸນຄ່າຂອງຄວາມເປັນມໍຣະດົກໂລກ.

1. ສິ່ງທ້າທາຍໃນການສ້າງລະບົບການຂົນສົ່ງເພື່ອທຸກຄົນໃນສັງຄົມ ແລະ ໃຫ້ມີຄວາມສົມດຸນກັນ
2. ສິ່ງທ້າທາຍໃນການສ້າງລະບົບການທ່ຽວຊົມຕົວເມືອງທີ່ຍືນຍົງ ແລະ ເປັນມິດກັບນັກທ່ອງທ່ຽວ
3. ສິ່ງທ້າທາຍໃນການເສີມສ້າງພື້ນຖານໂຄງລ່າງ ແລະ ປູກຈິດສໍານຶກ ເພື່ອສົ່ງເສີມຄວາມປອດໄພ
4. ສິ່ງທ້າທາຍໃນການນໍາໃຊ້ຫຼັກການພື້ນທີ່ສາທາລະນະເພື່ອຮັກສາຄຸນລັກສະນະດ້ານປະຫວັດສາດຂອງຫຼວງພະບາງ

ເພື່ອຮັບມືກັບສະພາບການເຫຼົ່ານັ້ນ ແມ່ນຈໍາເປັນຕ້ອງສ້າງການຂົນສົ່ງໃນຕົວເມືອງແບບຍືນຍົງ ແລະ ເພື່ອທຸກຄົນໃນສັງຄົມ ລວມທັງປົກປັກຮັກສາທັດສະນີຍະພາບຂອງຫຼວງພະບາງເມືອງມໍຣະດົກໂລກ. ມາດຕະການທີ່ສໍາຄັນລວມມີການນໍາສະເໜີລະບົບການຂົນສົ່ງສາທາລະນະ ແລະ ການຂົນສົ່ງຂະໜາດນ້ອຍ, ການຄຸ້ມຄອງການຈອດພາຫະນະ, ເສີມສ້າງຄວາມເຂັ້ມແຂງດ້ານມາດຕະການຄວາມປອດໄພຕາມທ້ອງຖະໜົນ, ປັບປຸງສະພາບແວດລ້ອມທາງຍ່າງ ແລະ ສົ່ງເສີມວຽກງານການສ້າງພື້ນທີ່ສາທາລະນະ ເພື່ອຍົກລະດັບການເດີນທາງ ແລະ ຄຸນລັກສະນະປະຫວັດສາດຂອງຫຼວງພະບາງເມືອງມໍຣະດົກໂລກ.






## ສະພາບການໃນອະນາຄົດ

ໃນປະຈຸບັນ ແມ່ນມີຈໍານວນປະຊາກອນທີ່ເພີ່ມຂຶ້ນ, ເຂດຊານເມືອງມີການຫັນປ່ຽນເປັນຕົວເມືອງຢ່າງວ່ອງໄວ ແລະ ຈໍານວນນັກທ່ອງທ່ຽວກໍ່ເພີ່ມຂຶ້ນຢ່າງຫຼວງຫຼາຍ ເຊິ່ງຄາດວ່າໃນອະນາຄົດນັ້ນ ຄວາມຕ້ອງການຂອງປະຊາກອນ ແລະ ການທ່ອງທ່ຽວກໍ່ຈະເພີ່ມຂຶ້ນເຊັ່ນດຽວກັນ. ດັ່ງນັ້ນ, ລະບົບການຂົນສົ່ງທີ່ມີຢູ່ແມ່ນບໍ່ສາມາດຮອງຮັບຄວາມຕ້ອງການທີ່ເພີ່ມຂຶ້ນໄດ້ຢ່າງເໝາະສົມ ເຊິ່ງຈໍາເປັນຕ້ອງໄດ້ສ້າງທາງເລືອກການຂົນສົ່ງແບບຍືນຍົງ ພ້ອມທັງໃຫ້ມີການເດີນທາງໄປ-ມາທີ່ປອດໄພ ແລະ ໂລ່ງລ່ຽນ.




**ຈໍານວນປະຊາກອນ ໃນ ເຂດເປົ້າໝາຍ**

ແຫຼ່ງຂໍ້ມູນ: ວິເຄາະໂດຍທີມງານຊ່ຽວຊານໄຈກາ
ອີງຕາມ ຂໍ້ມູນສໍາຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສ ປີ 2015




**ຈໍານວນນັກທ່ອງທ່ຽວ ຢູ່ ແຂວງຫຼວງພະບາງ**

ແຫຼ່ງຂໍ້ມູນ: ວິເຄາະໂດຍທີມງານຊ່ຽວຊານໄຈກາ
ອີງຕາມ ຂໍ້ມູນການທ່ອງທ່ຽວຂອງ ພວທ

## ວິໄສທັດ

ວິໄສທັດແມ່ນແນວຄວາມຄິດໃນການພັດທະນາ ແລະ ການສ້າງລະບົບການຂົນສົ່ງໃນຕົວເມືອງໃນອະນາຄົດ ທີ່ລວມມີອົງປະກອບພື້ນຖານຂອງເປົ້າໝາຍ, ນະໂຍບາຍ ແລະ ຍຸດທະສາດທີ່ກຳນົດໄວ້ໃນແຜນແມ່ບົດ. ວິໄສທັດນີ້ບໍ່ເປັນພຽງແຕ່ຈຸດໝາຍປາຍທາງທີ່ຕ້ອງສູ້ຊົນໄປດ້ວຍກັນ ແຕ່ໝາຍເຖິງການມີແນວທາງຮ່ວມກັນທີ່ພວກເຮົາທຸກຄົນຕ້ອງເປັນເຈົ້າການຮ່ວມກັນ.

ສ້າງການຂົນສົ່ງໃນນະຄອນຫຼວງພະບາງ ໃຫ້ເປັນລະບົບທີ່ຍືນຍົງ, ມີຄວາມສະດວກ, ປອດໄພ, ເປັນມິດກັບສິ່ງແວດລ້ອມ ຄຽງຄູ່ກັບການປົກປັກຮັກສາວັດທະນະທຳ, ສະຖາປັດຕະຍະກຳ ແລະ ທັດສະນີຍະພາບຂອງຫຼວງພະບາງເມືອງມໍຣະດົກໂລກ

## ເປົ້າໝາຍ

ເປົ້າໝາຍ ສະແດງໃຫ້ເຫັນເຖິງຜົນໄດ້ຮັບສະເພາະເມື່ອບັນລຸວິໄສທັດຂອງແຜນແມ່ບົດ. ໃນແຜນແມ່ບົດນີ້ ແມ່ນໄດ້ກຳນົດເປົ້າໝາຍທີ່ຕິດພັນກັບການເດີນທາງໃນ "ຊີວິດປະຈຳວັນ", "ການທ່ອງທ່ຽວ" ແລະ "ອຸດສາຫະກຳ" ທີ່ສະແດງໃຫ້ເຫັນສະພາບການໃນອະນາຄົດເມື່ອບັນລຸວິໄສທັດທີ່ໄດ້ກຳນົດໄວ້.

### ການເດີນທາງໃນ "ຊີວິດປະຈຳວັນ"

**ສິ່ງທີ່ສຳຄັນທີ່ສຸດໃນເປົ້າໝາຍຂອງພວກເຮົາ ແມ່ນເພື່ອເສີມຂະຫຍາຍຄຸນະພາບຊີວິດການເປັນຢູ່ຂອງປະຊາຊົນໃນທ້ອງຖິ່ນທີ່ອາໄສຢູ່ໃນແຂວງຫຼວງພະບາງ ໂດຍຜ່ານການປັບປຸງລະບົບການຂົນສົ່ງຕົວເມືອງ.**

- ທຸກຄົນສາມາດເດີນທາງໄດ້ຢ່າງອິດສະຫຼະ ແລະ ສະດວກສະບາຍ ດ້ວຍການສ້າງລະບົບການຂົນສົ່ງເພື່ອທຸກຄົນໃນສັງຄົມ.
- ຮັບປະກັນຄວາມປອດໄພ ແລະ ຄວາມໜ້າເຊື່ອຖືໃນການເດີນທາງໄປ-ມາໃນຊີວິດປະຈຳວັນ ດ້ວຍການປັບປຸງເສັ້ນທາງ.
- ມີສະພາບແວດລ້ອມແຄມທາງທີ່ດີຂຶ້ນ ດ້ວຍການຊຸກຍູ້ໃຫ້ຫັນມາໃຊ້ພາຫະນະທີ່ເປັນມິດຕໍ່ສິ່ງແວດລ້ອມ.



### ການເດີນທາງທີ່ຕິດພັນກັບ "ການທ່ອງທ່ຽວ"

**ຄວາມຄາດຫວັງແມ່ນໃຫ້ນັກທ່ອງທ່ຽວຮັບຮູ້ ແລະ ຊື່ນຊົມຄວາມເປັນມໍຣະດົກໂລກດ້ານປະຫວັດສາດ ແລະ ວັດທະນະທຳ ຂອງ ຫຼວງພະບາງ ດ້ວຍການສ້າງຖະໜົນຫົນທາງຄົນໃໝ່ເພື່ອພິຈາລະນາເຖິງພູມສັນຖານ-ທັດສະນີຍະພາບທາງປະຫວັດສາດ ແລະ ລະບົບການຂົນສົ່ງຂອງນັກທ່ອງທ່ຽວທີ່ມາທ່ອງທ່ຽວຫຼວງພະບາງ.**

- ເພີ່ມປະສິດທິພາບຂອງການເດີນທາງໄປ-ມາຂອງນັກທ່ອງທ່ຽວ ດ້ວຍການສ້າງລະບົບການຂົນສົ່ງທີ່ສາມາດນຳໃຊ້ໄດ້ຈິງ ແລະ ນຳໃຊ້ໄດ້ງ່າຍ ຢູ່ ເຂດມໍຣະດົກໂລກ.
- ມີນັກທ່ອງທ່ຽວ ທ່ຽວຊົມສະຖານທີ່ທ່ອງທ່ຽວນອກຕົວເມືອງຫຼາຍຂຶ້ນດ້ວຍການສະໜອງການເຂົ້າເຖິງທີ່ປອດໄພ ແລະ ເຊື່ອຖືໄດ້.
- ເສີມຂະຫຍາຍຈັກກະວານອັນໂດດເດັ່ນຂອງຫຼວງພະບາງເມືອງມໍຣະດົກໂລກ ດ້ວຍການທົບທວນການອອກແບບ ແລະ ນຳໃຊ້ຖະໜົນຄົນໃໝ່.



### ການເດີນທາງທີ່ຕິດພັນກັບວຽກງານ "ດ້ານອຸດສາຫະກຳ"

**ຫຼວງພະບາງແມ່ນມີພື້ນຖານໂຄງລ່າງທີ່ຫຼາກຫຼາຍ ເປັນຕົ້ນແມ່ນທາງບົກ, ທາງອາກາດ ແລະ ທາງລົດໄຟ ເຊິ່ງຈະໄດ້ສ້າງຕາໜ່າງເສັ້ນທາງສາຍເອກໃຫ້ມີການເຊື່ອມໂຍງ ແລະ ເຊື່ອມຈອດກັບ ພາກພື້ນ ເພື່ອເພີ່ມປະສິດທິພາບຂອງການຂົນສົ່ງສິນຄ້າ.**

- ປັບປຸງປະສິດທິພາບຂອງການຂົນສົ່ງສິນຄ້າ ດ້ວຍການເພີ່ມຕາໜ່າງເສັ້ນທາງທີ່ເຊື່ອມຈອດຂອງບັນດາເຂດເສດຖະກິດພິເສດ ແລະ ສູນກາງຂົນສົ່ງສິນຄ້າ
- ສ້າງກາລະໂອກາດໃໝ່ດ້ານທຸລະກິດ ດ້ວຍການຮ່ວມມືຢ່າງແໜ້ນແຟ້ນຂອງພາກລັດ-ເອກະຊົນ ເພື່ອເສີມສ້າງປະສິດທິພາບຂອງເສັ້ນທາງ.
- ເພີ່ມປະສິດທິພາບຂອງການຂົນສົ່ງສິນຄ້າດ້ວຍການປັບປຸງສິ່ງອຳນວຍຄວາມສະດວກໃນການຈອດລົດ ຢູ່ ອ້ອມຮອບເຂດຕະຫຼາດ.



## ນະໂຍບາຍ

ນະໂຍບາຍດ້ານການຂົນສົ່ງດັ່ງລຸ່ມນີ້ຈະຊ່ວຍໃນການສ້າງສະຖານທີ່ ຫຼື ພື້ນທີ່ ທີ່ມີການເຊື່ອມຈອດ ແລະ ເປັນສູນກາງຂອງຜູ້ຄົນ ຢູ່ທົ່ວທຸກເຂດຂອງຫຼວງພະບາງ. ນະໂຍບາຍເຫຼົ່ານີ້ແມ່ນຈະຊ່ວຍເສີມສ້າງວິໄສທັດຂອງຫຼວງພະບາງໃນອະນາຄົດ ເພື່ອ ສ້າງລະບົບການຂົນສົ່ງຫຼາຍຮູບແບບ ເພື່ອ ທຸກຄົນໃນສັງຄົມ ແລະ ມີຄວາມປອດໄພ, ມີການເດີນທາງໄປ-ມາຂອງຜູ້ຄົນ ແລະ ສ້າງພື້ນທີ່ສາທາລະນະທີ່ໜ້າດຶງດູດ ແລະ ແບບຍືນຍົງ.

**ຮັບປະກັນ ສິດທິໃນ ການເດີນທາງ**

01. ໃຫ້ບູລິມະສິດແກ່ຄົນຍ່າງ ແລະ ຄົນທ່ຽວຊົມຕົວເມືອງດ້ວຍການຂົນສົ່ງຫຼາຍຮູບແບບ ຢູ່ ຖະໜົນທຸກເສັ້ນ.
02. ເພີ່ມທາງເລືອກຂອງການຂົນສົ່ງທີ່ມີຫຼາກຫຼາຍຮູບແບບ ເພື່ອບັນລຸການຂົນສົ່ງທີ່ມີຄວາມສະເໝີພາບກັນ ຂອງປະຊາຊົນໃນທ້ອງຖິ່ນ.
03. ປັບປຸງຄວາມປອດໄພຕາມທ້ອງຖະໜົນອີງຕາມຫຼັກການສາມດ້ານ ຄື: ການປູກຈິດສຳນຶກ, ດ້ານວິຊາການ ແລະ ການບັງຄັບໃຊ້ລະບຽບ.
04. ບູລະນະ ແລະ ສ້ອມແປງ ຕາໜ່າງເສັ້ນທາງທີ່ສົ່ງເສີມການຂົນສົ່ງສິນຄ້າ ແລະ ປະກອບສ່ວນເຂົ້າໃນການສັນຈອນທີ່ເປັນມິດ ຢູ່ ໃນບັນດາເຂດທີ່ຢູ່ອາໄສ.

---

**ສ້າງສະຖານທີ່ ທີ່ໜ້າດຶງດູດ**

05. ສ້າງຖະໜົນ ແລະ ພື້ນທີ່ ທີ່ໜ້າດຶງດູດ ໂດຍຄຳນຶງເຖິງປະຫວັດສາດ ໃນ ເຂດມໍຣະດົກໂລກ.
06. ນຳໃຊ້ພື້ນທີ່ເຂດສະຫງວນຂອງທາງທີ່ສ່ວນໃຫຍ່ໃຊ້ເປັນບ່ອນຈອດລົດແຄມທາງ ໃຫ້ເກີດຜົນປະໂຫຍດສູງສຸດໃນການນຳໃຊ້ທີ່ດິນ.

---

**ສ້າງອະນາຄົດ ທີ່ດີຂຶ້ນ**

07. ສົ່ງເສີມຍຸດທະສາດການພັດທະນາທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ເພື່ອສຸຂະພາບທີ່ດີ ໃນຂະແໜງການບໍລິການຂົນສົ່ງ.
08. ນຳໃຊ້ເຕັກໂນໂລຢີ ເພື່ອການຂົນສົ່ງ ແລະ ເດີນທາງໄປ-ມາທີ່ມີປະສິດທິພາບ ແລະ ປອດໄພ.

---

**ສ້າງໂຄງຮ່າງ ການຈັດຕັ້ງ ທີ່ຍືນຍົງ**

09. ສືບຕໍ່ສ້າງກົນໄກໃນການຍາດແຍ່ງແຫຼ່ງທຶນເພື່ອສົ່ງເສີມການພັດທະນາລະບົບການຂົນສົ່ງໃນຕົວເມືອງ.
10. ສ້າງຕັ້ງຄະນະກຳມະການທີ່ປະກອບມີຫຼາຍພາກສ່ວນທີ່ກ່ຽວຂ້ອງ ເພື່ອປຶກສາຫາລືກ່ຽວກັບການຄຸ້ມຄອງການຂົນສົ່ງ ແລະ ຕົວເມືອງທີ່ຄົບຖ້ວນ, ສົມບູນ ແລະ ສາມາດປັບປ່ຽນຕາມສະພາບການໄດ້.

## ຍຸດທະສາດ



ຍຸດທະສາດ ແມ່ນວິທີການ ຫຼື ຮູບແບບການໂດຍລວມ ເຊິ່ງເປັນແນວທາງໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ບັນລຸວິໄສທັດ (ເບິ່ງໜ້າ 3) ພ້ອມທັງເປັນພື້ນຖານດ້ານມາດຕະການ ແລະ ການປະຕິບັດງານທີ່ຊັດເຈນ (ເບິ່ງໜ້າ 5-8).

1. ຍຸດທະສາດດ້ານໂຄງຮ່າງລະບົບການຂົນສົ່ງໃນຕົວເມືອງອີງຕາມລະດັບຂອງເສັ້ນທາງ
2. ຍຸດທະສາດໃນການເພີ່ມປະສິດທິພາບຂອງທາງຍ່າງ
3. ຍຸດທະສາດທີ່ສົ່ງເສີມການນຳໃຊ້ການຂົນສົ່ງຂະໜາດນ້ອຍລວມໄປເຖິງການຂີ່ລົດຖີບ
4. ຍຸດທະສາດໃນການສ້າງການຂົນສົ່ງສາທາລະນະເພື່ອທຸກຄົນໃນສັງຄົມ
5. ຍຸດທະສາດໃນການສ້າງຕາໜ່າງເສັ້ນທາງອີງຕາມການນຳໃຊ້ ແລະ ປະສິດທິພາບຂອງເສັ້ນທາງ
6. ຍຸດທະສາດໃນການປົກປັກຮັກສາມໍຣະດົກໂລກ ແລະ ເຮັດໃຫ້ມີຄຸນຄ່າ
7. ຍຸດທະສາດໃນການຄຸ້ມຄອງການຂົນສົ່ງແບບເຊື່ອມໂຍ່ງ
8. ຍຸດທະສາດໃນການນຳໃຊ້ເທັກໂນໂລຊີ ເພື່ອຄວາມປອດໄພ ແລະ ມີປະສິດທິພາບ

ການປະຕິບັດງານທີ່ສອດຄ່ອງກັບນະໂຍບາຍ ແລະ ຍຸດທະສາດ ອີງຕາມເປົ້າໝາຍຂອງແຜນແມ່ບົດນີ້ ແມ່ນເປັນບາດກ້າວທີ່ສຳຄັນໃນການຫັນປ່ຽນເປົ້າໝາຍການຂົນສົ່ງໃນຕົວເມືອງໄປສູ່ການຈັດຕັ້ງປະຕິບັດຕົວຈິງ. ຂະບວນການນີ້ ແມ່ນການຜັນຂະຫຍາຍແນວທາງທິດສະດີໄປສູ່ແຜນການປະຕິບັດຕົວຈິງ ແລະ ນຳໄປສູ່ການປ່ຽນແປງທີ່ເຫັນໄດ້ຊັດເຈນ. ດ້ວຍການຈັດຕັ້ງປະຕິບັດບັນດາການປະຕິບັດງານເຫຼົ່ານີ້ ແມ່ນສາມາດບັນລຸເປົ້າໝາຍຂອງແຜນແມ່ບົດໄດ້. ການປະຕິບັດງານໄດ້ແບ່ງອອກເປັນ 2 ປະເພດຄື: "ການປະຕິບັດງານໃນທົ່ວທຸກເຂດຂອງແຜນແມ່ບົດ" ແລະ "ການປະຕິບັດງານສະເພາະເຂດ". ພ້ອມກັນນັ້ນ, ກໍ່ໄດ້ແບ່ງເຂດເປົ້າໝາຍຂອງແຜນແມ່ບົດອອກເປັນ 5 ຂົງເຂດ ເຊິ່ງແຕ່ລະຂົງເຂດແມ່ນໄດ້ກຳນົດເປົ້າໝາຍສະເພາະ ແລະ ບັນດາຈຸດປະສົງຂອງການປະຕິບັດງານໂດຍອີງໃສ່ຄຸນລັກສະນະຂອງແຕ່ລະຂົງເຂດ ລວມໄປເຖິງສິ່ງທ້າທາຍ ແລະ ພາລະບົດບາດຂອງເຂດນັ້ນໆອີກດ້ວຍ.




5 ຂົງເຂດເປົ້າໝາຍ

## ການປະຕິບັດງານໃນທົ່ວທຸກເຂດຂອງແຜນແມ່ບົດ

### ສ້າງການຂົນສົ່ງສາທາລະນະເພື່ອທຸກຄົນໃນສັງຄົມ

ການສ້າງຕາໜ່າງຂົນສົ່ງສາທາລະນະ ທີ່ເຊື່ອມຈອດບັນດາຂົງເຂດທີ່ສຳຄັນໃນຫຼວງພະບາງ ແລະ ສູນກາງຂົນສົ່ງຫຼັກ ແມ່ນຈະເຮັດໃຫ້ການເດີນທາງມີຄວາມສະດວກສະບາຍ ແລະ ສົ່ງເສີມການເຂົ້າເຖິງໄດ້ຍິ່ງຂຶ້ນ ພ້ອມທັງຈະຊ່ວຍສ້າງສະພາບແວດລ້ອມທີ່ປະຊາຊົນໃນທ້ອງຖິ່ນ ແລະ ນັກທ່ອງທ່ຽວ ສາມາດເດີນທາງໄປ-ມາໄດ້ຢ່າງປອດໄພ, ສະດວກສະບາຍ ແລະ ມີການສັນຈອນທີ່ໂລ່ງລ່ຽນ ດ້ວຍການຂົນສົ່ງສາທາລະນະ.




ຕາໜ່າງການຂົນສົ່ງສາທາລະນະໃນອະນາຄົດ

### ສ້າງຕາໜ່າງເສັ້ນທາງອີງຕາມການນຳໃຊ້ ແລະ ປະສິດທິພາບຂອງເສັ້ນທາງ

ປັບປຸງຕາໜ່າງເສັ້ນທາງໂດຍກຳນົດປະເພດເສັ້ນທາງ ແລະ ພາລະບົດບາດຂອງແຕ່ລະເສັ້ນທາງຢ່າງຊັດເຈນ ເພື່ອໃຫ້ມີການເຊື່ອມຈອດ ກັບບັນດາຂົງເຂດທີ່ສຳຄັນ ແລະ ອຳນວຍຄວາມສະດວກໃນການເດີນທາງໃຫ້ມີຄວາມໂລ່ງລ່ຽນພາຍໃນຕົວເມືອງ, ສ້າງຕາໜ່າງເສັ້ນທາງທີ່ມີປະສິດທິພາບທີ່ອຳນວຍຄວາມສະດວກໃນການເດີນທາງ. ນອກຈາກນັ້ນ, ການປະຕິບັດງານເຫຼົ່ານີ້ ຍັງຊ່ວຍປະກອບສ່ວນເຂົ້າໃນການເດີນທາງລະຫວ່າງເມືອງ ແລະ ລະຫວ່າງແຂວງໃຫ້ມີປະສິທິພາບຫຼາຍຂຶ້ນ ດ້ວຍການປັບປຸງການຂົນສົ່ງສິນຄ້າ ແລະ ການເຂົ້າເຖິງທີ່ດີຂຶ້ນໃຫ້ແກ່ນັກທ່ອງທ່ຽວ ພ້ອມທັງຊ່ວຍໃນການກະຕຸກຊຸກຍູ້ອຸດສາຫະກຳໃນທ້ອງຖິ່ນອີກດ້ວຍ.




ຕາໜ່າງເສັ້ນທາງໃນອະນາຄົດ

## ການປະຕິບັດງານສະເພາະເຂດ

ການປະຕິບັດງານສະເພາະເຂດ ແມ່ນສຸມໃສ່ບັນດາຄຸນລັກສະນະຂອງແຕ່ລະຂົງເຂດ ແນໃສ່ທ່າແຮງຂອງການພັດທະນາ, ກໍານົດພາລະບົດບາດຂອງແຕ່ລະຂົງເຂດ ແລະ ຕອບສະໜອງຄວາມຕ້ອງການຂອງທ້ອງຖິ່ນ, ທັງນີ້ ກໍ່ເພື່ອເຮັດໃຫ້ມີການພັດທະນາຕົວເມືອງທີ່ສົມດຸນ. ໂດຍລວມເອົາການປະຕິບັດງານສະເພາະເຂດ ກັບ ການປະຕິບັດງານໃນທົ່ວທຸກເຂດຂອງແຜນແມ່ບົດ (ເບິ່ງໜ້າ 5) ເຂົ້າກັນນັ້ນ ແມ່ນເປັນການເສີມສ້າງພື້ນຖານການຂົນສົ່ງສາທາລະນະແບບຍືນຍົງ ແລະ ມີປະສິດທິພາບ.




ເຂດໃຈກາງນະຄອນຫຼວງພະບາງ




ເຂດດອນເໜືອ




ເຂດຕາເວັນອອກ




ເຂດຕາເວັນຕົກ




ເຂດເມືອງຈອມເພັດ



## ອີງປະກອບການປະຕິບັດງານທີ່ສຳຄັນ

### ເຂດການສັນຈອນທີ່ເປັນມິດ ໃນ ເຂດມໍຣະດົກໂລກ

ໃນ ເຂດມໍຣະດົກໂລກຫຼວງພະບາງ ແມ່ນຈະນຳສະເໜີເຂດການສັນຈອນທີ່ເປັນມິດ ເພື່ອປົກປັກຮັກສາວັດທະນາທຳ ແລະ ຄຸນຄ່າຄວາມເປັນມໍຣະດົກໂລກ ພ້ອມທັງຮັບປະກັນພື້ນທີ່ທາງຍ່າງທີ່ປອດໄພ ແລະ ສະດວກສະບາຍ. ອີງຕາມຫຼັກການຂອງເຂດການສັນຈອນທີ່ເປັນມິດນີ້ ແມ່ນຈະໄດ້ຈຳກັດການເຂົ້າ-ອອກ ຂອງພາຫະນະທີ່ໃຊ້ກົນຈັກ ອະນຸຍາດໃຫ້ເຂົ້າໄດ້ສະເພາະພາຫະນະຂອງປະຊາຊົນທີ່ອາໄສໃນເຂດນັ້ນໆ, ພາຫະນະບໍລິການທີ່ໄດ້ຮັບອະນຸຍາດ ແລະ ພາຫະນະຂົນສົ່ງສິນຄ້າ. ພ້ອມທັງບັງຄັບໃຊ້ລະບຽບຄວບຄຸມການເຂົ້າ-ອອກຂອງພາຫະນະໃນຊ່ວງຊົ່ວໂມງໃດໜຶ່ງຢ່າງເຂັ້ມງວດ. ໂດຍລວມແລ້ວ, ແມ່ນຈະໄດ້ຄ່ອຍໆນຳສະເໜີເຂດການສັນຈອນທີ່ເປັນມິດ ຮອດປີ 2030 ໂດຍຜ່ານການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ.




**ແນວຄວາມຄິດຂອງເຂດການສັນຈອນທີ່ເປັນມິດ**




ແນວຄວາມຄິດຂອງການອອກແບບຖະໜົນສີສະຫວ່າງວົງ ແລະ ຖະໜົນສັກກະລິນ

### ການອອກແບບຖະໜົນ

ເພື່ອບັນລຸການສ້າງຖະໜົນທີ່ເປັນສູນກາງຂອງຜູ້ຄົນ ແມ່ນຈະມີການອອກແບບທີ່ເຮັດໃຫ້ລະດັບທາງລົດແລ່ນ ແລະ ທາງຍ່າງພຽງກັນ, ຈະໄດ້ມີການປູພື້ນຖະໜົນຫົນທາງຄືນໃໝ່ ດ້ວຍບ໋ອກປູພື້ນແບບປະສານ. ອອກແບບຖະໜົນໂດຍຄຳນຶງເຖິງຄວາມປອດໄພ ແລະ ທັດສະນີຍະພາບຂອງຖະໜົນຫົນທາງ ດ້ວຍການປຶກສາຫາລືກັບຜູ້ຢູ່ອາໄສ ແລະ ພາກສ່ວນທີ່ກ່ຽວຂ້ອງ ພາຍໃນເຂດນັ້ນໆ.

### ການສ້າງພື້ນທີ່ສາທາລະນະ

ເພື່ອແນໃສ່ການສ້າງຕົວເມືອງທີ່ມີປະຊາຊົນເປັນເຈົ້າການ ແລະ ຄວາມພາກພູມໃຈຂອງປະຊາຊົນນັ້ນ, ໂດຍຜ່ານກິດຈະກຳການສ້າງພື້ນທີ່ສາທາລະນະ ແມ່ນໄດ້ສົ່ງເສີມໃຫ້ມີຮູບແບບການພັດທະນາຕົວເມືອງໂດຍການມີສ່ວນຮ່ວມຂອງຊຸມຊົນ. ຕົວຢ່າງ: ສ້າງສູນຊຸມຊົນ ເພື່ອໃຫ້ມີການແລກປ່ຽນເຊິ່ງກັນ ແລະ ກັນ ຂອງ ປະຊາຊົນ ແລະ ນັກທ່ອງທ່ຽວ.





## ອົງປະກອບການປະຕິບັດງານທີ່ມີບູລິມະສິດສູງ

ບັນດາອົງປະກອບທີ່ຈັດເຂົ້າໃນການຈັດຕັ້ງປະຕິບັດໃນໄລຍະສັ້ນ ແມ່ນຄວນຖືກຈັດຕັ້ງປະຕິບັດພາຍໃນ 3ປີ ເຊິ່ງອົງປະກອບເຫຼົ່ານັ້ນເອີ້ນວ່າ "ອົງປະກອບທີ່ມີບູລິມະສິດສູງ". ບັນດາອົງປະກອບການປະຕິບັດງານດັ່ງລຸ່ມນີ້ ແມ່ນກຳນົດໃຫ້ເປັນບູລິມະສິດສູງສຸດໃນການຈັດຕັ້ງປະຕິບັດ.

1 ປັບປຸງລະບຽບດ້ານການສັນຈອນ ທີ່ມີຄວາມຈຳເປັນໃນການກຳນົດເຂດການສັນຈອນທີ່ເປັນມິດ.

2 ສ້າງລະບົບການຂົນສົ່ງສາທາລະນະ ທີ່ຮັບປະກັນການເດີນທາງພາຍໃນເຂດການສັນຈອນທີ່ເປັນມິດ ແລະ ເຂດນອກ.

3 ການຈັດຕັ້ງປະຕິບັດວຽກງານການວາງແຜນແບບມີສ່ວນຮ່ວມຂອງຊຸມຊົນ ເພື່ອສົ່ງເສີມ "ຄວາມພາກພູມໃຈຂອງພົນລະເມືອງ"

4 ອອກແບບພື້ນທີ່ທາງຍ່າງຄືນໃໝ່ (ອອກແບບຖະໜົນ) ຢູ່ບັນດາຖະໜົນເສັ້ນຫຼັກ ໃນເຂດການສັນຈອນທີ່ເປັນມິດ.

5 ປັບປຸງຄວາມປອດໄພ ຂອງຜູ້ໃຊ້ທາງຍ່າງ ແລະ ຜູ້ໃຊ້ລົດຖີບຢູ່ຕາມບັນດາທາງຮ່ອມໃນບ້ານ ທີ່ມີປະລິມານການສັນຈອນລົດຫຼາຍ ແລະ ບໍ່ມີທາງຄົນຍ່າງ.

6 ກໍ່ສ້າງ/ປັບປຸງເສັ້ນທາງ ເພື່ອສົ່ງເສີມການເດີນທາງໄປສູ່ເຂດອື່ນ ແລະ ການຂົນສົ່ງສິນຄ້າ.




ອົງປະກອບການປະຕິບັດງານທີ່ມີບູລິມະສິດສູງ

## ຄະນະກຳມະການຊີ້ນຳແຜນແມ່ບົດການຂົນສົ່ງໃນຕົວເມືອງຫຼວງພະບາງ

- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ
- ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງຫຼວງພະບາງ
- ພະແນກ ວັດທະນະທຳ ແລະ ການທ່ອງທ່ຽວ ແຂວງຫຼວງພະບາງ
- ຫ້ອງວ່າການປົກຄອງເມືອງຈອມເພັດ
- ມະຫາວິທະຍາໄລແຫ່ງຊາດລາວ
- ຫ້ອງວ່າການປົກຄອງແຂວງຫຼວງພະບາງ
- ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງຫຼວງພະບາງ
- ຫ້ອງວ່າການປົກຄອງນະຄອນ-ຫຼວງພະບາງ
- ກອງບັນຊາການປ້ອງກັນຄວາມສະຫງົບ ນະຄອນ-ຫຼວງພະບາງ
- ມະຫາວິທະຍາໄລສຸພານຸວົງ
- ອົງການຮ່ວມມືສາກົນຍີ່ປຸ່ນ


ຕິດຕໍ່ພົວພັນທີ່: ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງຫຼວງພະບາງ,
ຖະໜົນເລກ 13ເໜືອ, ບ້ານພອນໄຊ, ນະຄອນຫຼວງພະບາງ, ແຂວງ ຫຼວງພະບາງ
ໂທ: 071 253 710